ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

PCD

ເລກທີ: 729 /ພກພ

ນະຄອນຫຼວງວຽງຈັນ, ວັນທີ: 28 APR 2021

ຮຽນ : ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
: ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
: ທ່ານ ຜູ້ຖືຮຸ້ນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ເລື່ອງ : ແຈ້ງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບ ວ່າດ້ວຍການເປີດເຜີຍຂໍ້ມູນ ຂອງຕະຫຼາດຫຼັກຊັບລາວ ສະບັບເລກທີ 008 / ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ທີ່ໄດ້ຈັດຂຶ້ນ ໃນວັນທີ 28 ເມສາ 2021 ເວລາ 14:15 ໂມງ ຫາ 15:00 ໂມງ. ທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ໂດຍມີຜູ້ເຂົ້າຮ່ວມທັງໝົດ 40 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 11 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 29 ທ່ານ, ເຊິ່ງຖືຮຸ້ນລວມກັນທັງ ໝົດ 570,531,900 ຮຸ້ນ, ເທົ່າກັບ 98,03% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ. ກອງປະຊຸມໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 570,531,900 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2020 ແລະ ເອກະສານລາຍງານການເງິນ ປະຈຳປີ 2020 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 570,531,900 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3: ພິຈາລະນາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2020

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 570,531,900 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 570,531,900 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2021

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 570,531,900 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ.

ຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ປະທານກອງປະຊຸມ

ສີທາ ພິມມະຈິດ